CONSUMER DIRECT CARE NETWORK

# ການເບິ່ງບັນດາລາຍການເວລາ ໃນປະຕູເວັບ DirectMyCare

ທ່ານສາມາດໃຊ້ປະຕູເວັບໄຊ DirectMyCare ເພື່ອເບິ່ງບັນດາລາຍການເວລາ ແລະ ໄລຍະທາງທັງໝົດ. ເຖິງແມ່ນວ່າໜ້າຈໍຂອງທ່ານອາດຈະມີຄວາມແຕກຕ່າງເລັກນ້ອຍຈາກຕົວຢ່າງຂ້າງລຸ່ມນີ້ກໍຕາມ, ແຕ່ບັນດາຂັ້ນຕອນຈະຍັງຄົງຄືກັນ.

## ການເບິ່ງບັນດາລາຍການເວລາ

1. ໄປທີ່ DirectMyCare.com ແລະ ເຂົ້າສູ່ລະບົບປະຕູເວັບໄຊໂດຍການປ້ອນທີ່ຢູ່ອີເມວ ແລະ ລະຫັດຜ່ານຂອງທ່ານໃສ່. ເລືອກ **Log In (ເຂົ້າສູ່ລະບົບ)** ແລະ ລະບົບຈະນຳໄປຍັງໜ້າຫຼັກ.
2. ເລືອກ ລາຍການເວລາ/ໄລຍະທາງ ເພື່ອເບິ່ງປະຕິທິນ ແລະ ລາຍການການບໍລິການຕ່າງໆ (ຮູບທີ 01).
3. ໃນໜ້າຈໍຖັດໄປ, ທ່ານສາມາດໃຊ້ລູກສອນເພື່ອເບິ່ງບັນດາອາທິດຂ້າງໜ້າ ຫຼື ກັບຄືນໄປຍັງປະຕິທິນເພື່ອເລືອກມື້ ແລະ ທ່ານສາມາດນຳໃຊ້ເມນູເລື່ອນລົງເພື່ອເລືອກລາຍການເວລາ ຫຼື ໄລຍະທາງໄດ້, ຖ້າມີ (ຮູບທີ 02).




*ຮູບທີ 01*




*ຮູບທີ 02*

ຖ້າທ່ານມີຫຼາຍກວ່າໜຶ່ງທາງເລືອກ, ໃຫ້ໃຊ້ເມນູເລື່ອນລົງເຫຼົ່ານີ້ ເພື່ອເລືອກປະເພດລາຍການ ແລະ ບຸກຄົນ.

4. ຫຼັງຈາກເລືອກມື້ແລ້ວ, ທ່ານຈະເຫັນລາຍການລະຫັດການບໍລິການທີ່ສາມາດໃຊ້ໄດ້. ເລືອກ **View Entry (ເບິ່ງລາຍການ)** ທີ່ຢູ່ຖັດຈາກລະຫັດການບໍລິການໃດໜຶ່ງ ເພື່ອເບິ່ງເວລາທັງໝົດທີ່ໄດ້ປ້ອນເຂົ້າສຳລັບອາທິດນັ້ນ. (ທ່ານອາດຈະຕ້ອງໄດ້ເລື່ອນລົງ ເພື່ອເບິ່ງລາຍການທັງໝົດ.)



*ມີຕໍ່ໃນໜ້າຕໍ່ໄປ*

ທ່ານຈະເຫັນກະວຽກທັງໝົດປະຈຳອາທິດສຳລັບການບໍລິການນັ້ນ, ພ້ອມກັບສະຖານະພາບຂອງແຕ່ລະກະວຽກ ແລະ ຈຳນວນຊົ່ວໂມງທັງໝົດ (ຮູບທີ 03).




ຈຳນວນຊົ່ວໂມງ ຫຼື ໄລຍະທາງທັງໝົດ ທີ່ໄດ້ປ້ອນເຂົ້າປະຈຳອາທິດ.

ເລືອກລິ້ງເຊື່ອມຕໍ່ **VIEW (ເບິ່ງ)** ສຳລັບລາຍລະອຽດກ່ຽວກັບກະວຽກ.

*ຮູບທີ 03*